ຄູ່ມືການນຳໃຊ້ລະບົບສື່ສານພາກລັດ

G-Chat ສຳລັບລະບົບ Android ແລະ IOS

ກະຊວງເຕັກໂນໂລຊີ ແລະ ການສື່ສານ, ສູນບໍລິຫານລັດດິຈິຕອນ

ນະຄອນຫຼວງວຽງຈັນ, ປີ 2026

ຄຳນຳ

ລະບົບສື່ສານພາກລັດ (G-Chat) ແມ່ນໄດ້ຮັບການພັດທະນາຂຶ້ນມາໃນປີ 2018 ແລະ ເປີດການນຳໃຊ້ໃນປີ 2019. ເພື່ອຄວາມປອດໄພທາງດ້ານຂໍ້ມູນ ແລະ ການຄຸ້ມຄອງລວມສູນຂອງລັດ. ລະບົບທັງໝົດແມ່ນໄດ້ຕິດຕັ້ງໄວ້ທີ ສູນຂໍ້ມູນແຫ່ງຊາດ, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ (ກຕສ), ສປປ ລາວ. ລະບົບແມ່ນສາມາດນຳໃຊ້ໄດ້ທັງ ຄອມພິວເຕີ ແລະ ໂທລະສັບມືຖືສະມາດໂຟນ. ຜ່ານມາລັດຖະບານ ໂດຍສະເພາະແມ່ນ ກຕສ ໄດ້ມີການໂຄສະນາ, ເຜີຍແຜ່, ຊຸກຍູ້ ແລະ ຝຶກອົບຮົມການນຳໃຊ້ລະບົບດັ່ງກ່າວໃຫ້ບັນດາອົງການຈັດຕັ້ງພັກ-ລັດ ໃນຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການນຳໃຊ້ລະບົບດັ່ງກ່າວ ເຂົ້າໃນວຽກງານຕົວຈິງຂອງຕົນ, ພົ້ນເດັ່ນແມ່ນຊ່ວງໄລຍະການແຜ່ລະບາດຂອງ ພະຍາດໂຄວິດ19 ທ້ອງວ່າການສຳນັກງານນາຍົກລັດຖະມົນຕີໄດ້ອອກແຈ້ງການ ໃຫ້ມີການນຳໃຊ້ລະບົບສື່ສານພາກລັດ (G-Chat)ນີ້ ໃນການສົ່ງ-ຮັບ ເອກະສານທາງການ, ສະບັບເລກທີ 1788/ຫສນຍ, ລົງວັນທີ 8 ຕຸລາ 2019. ເພື່ອ ເຮັດໃຫ້ການນຳໃຊ້ມີຄວາມລະບຽບ, ສະດວກ ແລະ ສາມາດຄຸ້ມຄອງໄດ້, ກະຊວງ ຕສ ໄດ້ສ້າງຂໍ້ຕົກລົງວ່າດ້ວຍການ ຄຸ້ມຄອງ ແລະ ນຳໃຊ້ລະບົບສື່ສານພາກລັດ (G-Chat) ສະບັບເລກທີ 2599/ກຕສ, ລົງວັນທີ 12 ສິງຫາ 2022. ເພື່ອເປັນບ່ອນອີງໃຫ້ອົງການຈັດຕັ້ງພັກ-ລັດໃນຂອບເຂດທົ່ວປະເທດໃນການຄຸ້ມຄອງ ແລະ ນຳໃຊ້. ພ້ອມກັນນັ້ນ ໃນປີ ດຽວກັນ (ປີ 2022) ລະບົບສື່ສານພາກລັດ (G-Chat) ກໍ່ໄດ້ຮັບລາງວັນ ASOCIO Tech Excellence Award ປະຈຳປີ 2022, ໃນໝວດ ລັດຖະບານດິຈິຕອນ (ASOCIO Digital Government Award) ເຊິ່ງລາງວັນ ດັ່ງກ່າວແມ່ນ ການຄັດເລືອກຂອງບັນດາປະເທດສະມາຊິກຂອງສະມາຄົມ ASOCIO ທີ່ປະກອບມີ ຕົວແທນ ຈາກ ສະມາຄົມ ໄອຊີທີ ຂອງ 24 ປະເທດ ໃນເຂດອາຊີ-ປາຊີຟິກ, ເຊິ່ງທາງສະມາຄົມ ASOCIO ໄດ້ຈັດພິທີມອບລາງວັນ ດັ່ງກ່າວເປັນທາງການ ຂຶ້ນໃນຕອນຄ່ຳຂອງ ວັນທີ 28 ຕຸລາ 2022 ຢູ່ທີ່ປະເທດສິງກະໂປ.

ມາຮອດປີ 2025 ໄດ້ມີການປັບປຸງລະບົບສື່ສານພາກລັດ (G-Chat) ເວີຊັນ2, ແລະ ໄດ້ເຊື່ອມໂຍງກັບ ລະບົບປັນຍາປະດິດລາວ (LaoAI) ກາຍເປັນ G-Chat v2 + LaoAI. ເຊິ່ງເຮັດໃຫ້ຜູ້ທີ່ໄດ້ລົງທະບຽນນຳໃຊ້ລະບົບ ສື່ສານພາກລັດ (G-Chat V2) ນີ້ສາມາດນຳໃຊ້ລະບົບ ບັນຍາປະດິດລາວ ຫຼື Lao AI ໄດ້ແບບອັດຕະໂນມັດ, ພ້ອມ ກັນນັ້ນຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ກໍ່ໄດ້ອອກແຈ້ງການເລື່ອງການນຳໃຊ້ລະບົບສື່ສານພາກລັດ (G-Chat) ແລະ ລະບົບບໍລິຫານລັດດິຈິຕອນ ເຂົ້າໃນການບໍລິຫານ ແລະ ບໍລິການວຽກງານຂອງລັດ, ສະບັບເລກທີ 884/ ຫສນຍ, ລົງວັນທີ 29 ມິຖຸນາ 2026. ຊຶ່ງແຈ້ງການສະບັບດັ່ງກ່າວ ຖືເປັນບ່ອນອີງທາງດ້ານນິຕິກຳອັນສຳຄັນຍິ່ງ ໃນ ການຊຸກຍູ້, ຜັນຂະຫຍາຍ ແລະ ກຳນົດໃຫ້ບັນດາອົງການຈັດຕັ້ງພັກ-ລັດ, ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ທຸກຂັ້ນ ຫັນປ່ຽນມາ ໃຊ້ມາດຕະການສື່ສານຜ່ານລະບົບດິຈິຕອນທີ່ມີຄວາມປອດໄພສູງນີ້ ເຂົ້າໃນການຮັບ-ສົ່ງ ເອກະສານທາງການ, ການປຶກສາຫາລືວຽກງານ ແລະ ການປະສານງານຮ່ວມກັນຢ່າງເປັນທາງການ, ຮັບປະກັນການ ຮັກສາຄວາມລັບຂອງທາງລາຊະການ ພ້ອມທັງເປັນການ ຜັນຂະຫຍາຍວຽກງານຫັນເປັນລັດຖະບານດິຈິຕອນ ໃຫ້ ປະກົດຜົນເປັນຈິງຢ່າງເລິກເຊິ່ງ ແລະ ມີປະສິດທິຜົນສູງສຸດ.

ສາລະບານ

I. ກ່ຽວກັບລະບົບສື່ສານພາກລັດ (G-Chat) 4

II. ການຕິດຕັ້ງລະບົບສື່ສານພາກລັດ (G-Chat) 4

IV. ການປ່ຽນພາສາ 6

V. ການປ່ຽນລະຫັດຜ່ານ 7

VI. ການປ່ຽນຮູບໂປຟາຍ, ໃສ່ອີເມວ ແລະ ເບີໂທລະສັບ 8

VII. ການສົ່ງຂໍ້ຄວາມ, ສົ່ງຟາຍ ແລະ ຄົ້ນຫາ 8

VIII. ການສ້າງກຸ່ມສົນທະນາ 9

1. ວິທີສ້າງກຸ່ມສົງທະນາກຸ່ມສົນທະນາ 9

2. ປ່ຽນຮູບໂປຣຟາຍກຸ່ມ 10

3. ການລຶບກຸ່ມ 11

IX. ການນຳໃຊ້ LaoAI 12

X. ການແປພາສາ 12

XI. ສະຫຼຸບ 13

I. ກ່ຽວກັບລະບົບສື່ສານພາກລັດ (G-Chat)

ລະບົບສື່ສານພາກລັດ (G-Chat) ແມ່ນລະບົບສື່ສານ ຫຼື ແອັບພິເຄຊັນ ພາກລັດ ທີ່ພັດທະນາຂຶ້ນມາ ເພື່ອຮັບໃຊ້ເຂົ້າໃນວຽກງານທາງລັດຖະການ ໃນການຕິດຕໍ່ສື່ສານ ແລກປ່ຽນຂໍ້ມູນຂ່າວສານແບບອອນລາຍ ລະຫວ່າງພະນັກງານພັກ-ລັດດ້ວຍກັນ ໃຫ້ມີຄວາມສະດວກ ແລະ ປອດໄພ. ບໍ່ວ່າຈະເປັນການສົນທະນາທາງ ຂໍ້ຄວາມ, ຮັບ-ສົ່ງຟາຍເອກະສານທາງລັດຖະການ, ຟາຍຮູບພາບ, ວີດີໂອ ແລະ ອື່ນໆ.

II. ການຕິດຕັ້ງລະບົບສື່ສານພາກລັດ (G-Chat)

ທ່ານ ສາມາດດາວໂຫຼດລະບົບສື່ສານພາກລັດ (G-Chat) ແລະ ຕິດຕັ້ງຕາມຂັ້ນຕອນດັ່ງນີ້:

- **<u>ມືຖືລະບົບ Android</u>:** ໃຫ້ເປີດ Google Play ຂຶ້ນມາ ແລ້ວພິມຄຳວ່າ Lao G-Chat ເພື່ອຄົ້ນຫາລະບົບ ສື່ສານພາກລັດ (G-Chat)

- **<u>ມືຖືລະບົບ IOS</u>:** ໃຫ້ເປີດ App Store ຂຶ້ນມາ ແລ້ວພິມຄຳວ່າ Lao G-Chat ເພື່ອຄົ້ນຫາລະບົບສື ສານພາກລັດ (G-Chat)
  - **<u>ຫຼື ສະແກນ QR Code ດ້ານລຸ່ມນີ້ ↓</u>**

ANDROID APP ON Google play	Available on the iPhone App Store	Huawei
ສຳລັບມືຖືຍີ່ຫໍ Samsung, vivo, oppo ແລະ ລຸ່ນອື່ນໆ ທີລະບົບ Androi	ມືຖືຍີ່ຫໍ Apple	ມືຖືຍີ່ຫໍ Huawei

1. ຫຼັງຈາກທີ່ທ່ານຄົ້ນຫາ ລະບົບສື່ສານພາກລັດ (G-Chat) , ໃຫ້ທ່ານດຳເນີນການຕິດຕັ້ງຕາມຂັ້ນຕອນ.



2. ຫຼັງຈາກຕິດຕັ້ງສຳເລັດແລ້ວຈະເຫັນຮູບ ລະບົບສື່ສານພາກລັດ (G-Chat) ຂຶ້ນໃນໜ້າມືຖືຂອງທ່ານຂຶ້ນມາດັ່ງຮູບຂ້າງລຸ່ມນີ້



III. ວິທີເຂົ້ານຳໃຊ້ລະບົບສື່ສານພາກລັດ (G-Chat)

1. ເຂົ້າໄປທີ່ລະບົບ G-Chat ແລ້ວກົດເປີດລະບົບຂຶ້ນມາ
2. ຫຼັງຈາກນັ້ນໃຫ້ໃສ່ຊື່ຜູ້ໃຊ້ ແລະ ລະຫັດຜ່ານຂອງຕົນ ແລ້ວກົດ Login ເພື່ອເຂົ້າສູ່ລະບົບ





IV. ภาษปรุมพาสา

เพื่อถวามสะดวกในภาษนำใช้ ท่านสามาถปรุมพาสาลาวได้ดั่งนี้:

1. ก็ดไปที่รูบไอถอน ข้อย (Me) ด้านขวามื เพื่อเข้ำปรุมพาสา
2. เลือกรูบไอถอนทุงชาถลาว เพื่อสำเล็ดภาษปรุมพาสา



V. ການປ່ຽນລະຫັດຜ່ານ

ຫຼັງຈາກທ່ານເຂົ້າສູ່ລະບົບແລ້ວ, ທ່ານຕ້ອງການປ່ຽນລະຫັດຜ່ານໃຫ້ປະຕິບັດຕາມຂັ້ນຕອນດັ່ງລຸ່ມນີ້:

1. ກົດໄປທີ່ຮູບໄອຄອນ ຂ້ອຍ (Me) ຢູ່ດ້ານຂວາມື ເພື່ອເຂົ້າປ່ຽນລະຫັດຜ່ານ
2. ກົດໄປທີ່ ແກ້ໄຂລະຫັດຜ່ານ (Modify Password)
3. ພິມລະຫັດເກົ່າທີ່ທ່ານໄດ້ຮັບມາ. **ຕົວຢ່າງ**: qwer123456
   ໃສ່ຫ້ອງ ລະຫັດຜ່ານເກົ່າ
4. ພິມລະຫັດໃໝ່ທີ່ທ່ານຕ້ອງການປ່ຽນ. **ຕົວຢ່າງ**: Abc@1234
   ໃສ່ຫ້ອງ ລະຫັດຜ່ານໃໝ່
5. ຢືນຢັນລະຫັດຜ່ານອີກຄັ້ງ. **ຕົວຢ່າງ**: Abc@1234
   ໃສ່ຫ້ອງ ໃສ່ລະຫັດຜ່ານໃໝ່ອີກຄັ້ງ
6. ຫຼັງຈາກນັ້ນໃຫ້ກົດ ປຸ່ມ ຢືນຢັນການປ່ຽນລະຫັດຜ່ານ. ຖືວ່າສຳເລັດ.

VI. ການປ່ຽນຮູບໂປຟາຍ, ໃສ່ອີເມວ ແລະ ເບີໂທລະສັບ

ການປ່ຽນຮູບໂປຣຟາຍມີຂັ້ນຕອນດັ່ງນີ້:

1. ກົດໄປທີ່ຮູບໄອຄອນ ຂ້ອຍ (Me)ດ້ານຂວາມື ເພື່ອເຂົ້າປ່ຽນຮູບໂປຟາຍ
2. ເຂົ້າໄປຮູບໂປຟາຍຂອງທ່ານ ເພື່ອປ່ຽນຮູບໃໝ່
3. ເລືອກຮູບທີ່ທ່ານຕ້ອງການປ່ຽນໃນໂທລະສັບທ່ານ ແລ້ວກົດອັບໂຫຼດຮູບ ຖືວ່າສຳເລັດ.



VII. ການສົ່ງຂໍ້ຄວາມ, ສົ່ງຟາຍ ແລະ ຄົ້ນຫາ

ເມື່ອທ່ານຕ້ອງການທີ່ຈະຕິດຕໍ່ສົນທະນາ ຫຼືສົ່ງຂໍ້ຄວາມ, ສົ່ງຟາຍ ເອກະສານຫາບຸກຄົນໃດໜຶ່ງ, ທ່ານສາມາດປະຕິບັດຕາມຂັ້ນຕອນດັ່ງລຸ່ມນີ້:

1. ກົດທີ່ປຸ່ມການຕິດຕໍ່ ການຕິດຕໍ່ ຢູ່ດ້ານລຸ່ມປຸ່ມທີ 2
2. ກົດທີ່ຊ່ອງຄົ້ນຫາ ເພື່ອຄົ້ນຫາຊື່ ບຸກຄົນທີ່ທ່ານຕ້ອງການຄົ້ນຫາ ***ຕົວຢ່າງ:*** ທ່ານ ນ ສຸມາລີ ດວງມາລາ
3. ກົດເຂົ້າຊື່ທີ່ທ່ານຕ້ອງການທີ່ຈະຕິດຕໍ່ຫາ ເຂົ້າໄປທີ ປຸ່ມ ສົ່ງຂໍ້ຄວາມ
4. ຫຼັງຈາກນັ້ນທ່ານ ສາມາດສົ່ງຂໍ້ຄວາມ, ສົ່ງຟາຍ ເອກະສານ ຫາບຸກຄົນທີ່ທ່ານຕ້ອງການສົນທະນາ, ບໍ່ວ່າຈະເປັນການສົ່ງຂໍ້ຄວາມ, ສົ່ງຟາຍເອກະສານ, ຟາຍຮູບພາບ, ວິດີໂອ...



VIII. ການສ້າງກຸ່ມສົນທະນາ

1. ວິທີສ້າງກຸ່ມສົງທະນາກຸ່ມສົນທະນາ

ວິທີສ້າງກຸ່ມສົງທະນາກຸ່ມສົນທະນາ ມີຂັ້ນຕອນດັ່ງລຸ່ມນີ້:

1.1. ເຂົ້າໄປທີ່ໜ້າສົນທະນາ

1.2. ກົດທີ່ປຸ່ມໝາຍບວກ ເບື້ອງຂວາເທິງສຸດ

1.3. ເຂົ້າໄປທີ່ປຸ່ມ ສ້າງກຸ່ມ

1.4. ຄົ້ນຫາບຸກຄົນທີ່ທ່ານ ຕ້ອງການທີ່ຈະເອົາເຂົ້າໃນກຸ່ມ. ຕົວຢ່າງ: ທ່ານ ນ ກ, ທ່ານ ຂ...

1.5. ຫຼັງຈາກເລືອກຊື່ທີ່ທ່ານຕ້ອງການເພີ່ມເຂົ້າໃນກຸ່ມໄດ້ແລ້ວ ໃຫ້ກົດປຸ່ມ ຢືນຢັນ ດ້ານຂວາມືເທິງສຸດ ເພື່ອສ້າງກຸ່ມສົນທະນາ



1.6. ຫຼັງຈາກສ້າງກຸ່ມສຳເລັດແລ້ວ ໃຫ້ທ່ານເຂົ້າໄປຕັ້ງຊື່ກຸ່ມ ໂດຍການເຂົ້າໄປທີ ປຸ່ມສາມຈ້ຳດ້ານເທິງສຸດເບື້ອງຂວາມື

1.7. ເຂົ້າໄປຕັ້ງຊື່ກຸ່ມ ຢູ່ທີ່ຫ້ອງຂອງຊື່ກຸ່ມ

1.8. ຫຼັງຈາກເຂົ້າໄປໃນຫ້ອງຊື່ກຸ່ມແລ້ວ ໃຫ້ທ່າພິມຊື່ກຸ່ມທີ່ທ່ານຕ້ອງການ **ຕົວຢ່າງ**: ພະແນກລະບົບບໍລິການ ແລ້ວກົດ ຢືນຢັນ ເພື່ອສຳເລັດການຕັ້ງຊື່ກຸ່ມ.



2. ປ່ຽນຮູບໂປຣຟາຍກຸ່ມ

ທ່ານສາມາດປ່ຽນຮູບໂປຟາຍກຸ່ມໄດ້ດັ່ງນີ້:

1.9. ເຂົ້າໄປທີ່ກຸ່ມທີ່ທ່ານ ຕ້ອງການປ່ຽນຮູບໂປຣຟາຍ

1.10. ເຂົ້າໄປທີ່ປຸ່ມສາມຈໍ້າດ້ານເທິງເບື້ອງຂວາງມື

1.11. ເຂົ້າໄປທີ່ຊ່ອງຂອງ ຮູບໂປຣຟາຍກຸ່ມ

1.12. ແລ້ວເລືອກເອົາຮູບທີ່ທ່ານ ຕ້ອງການປ່ຽນ ຖືວ່າສຳເລັດການປ່ຽນຮູບ



3. ການລຶບກຸ່ມ

ຖ້າຫາກທ່ານຕ້ອງການລຶບຊື່ກຸ່ມ ໃຫ້ທ່ານກົດຄ້າງ ໃສ່ຊື່ກຸ່ມທີ່ທ່ານຕ້ອງການລຶບ, ຫຼັງຈາກນັ້ນກົດປຸ່ມ ລຶບ.



IX. ການນຳໃຊ້ LaoAI

ທ່ານສາມາດເຂົ້ານຳໃຊ້ **LaoAI ໄດ້ ດັ່ງນີ້:**

1. ເຂົ້າໄປທີ່ປຸ່ມ AI ດ້ານລຸ່ມເບື້ອງຂວາມື
2. ພິມຂໍ້ຄວາມທີ່ທ່ານຕ້ອງການຢາກຄົ້ນຫາຂໍ້ມູນ ໃນຊ່ອງພິມຂໍ້ມູນດ້ານລຸ່ມ ແລ້ວກົດປຸ່ມສົ່ງ



ໝາຍເຫດ: ກ່ອນຈະນຳໃຊ້ລະບົບປັນຍາປະດິດລາວ ຫຼື Lao AI ໄດ້ທ່ານຕ້ອງໄດ້ໃສ່ອີເມວ (e-Mail) ຂອງທ່ານ ໃນຊ່ອງ ອີເມວ ຢູ່ໂປຣຟາຍ ຂອງທ່ານກ່ອນ.

X. ການແປພາສາ

ການນຳໃຊ້ລະບົບແປພາສາ, ເຂົ້າຕາມຂັ້ນຕອນດັ່ງນີ້:

1. ເຂົ້າໄປທີ່ປຸ່ມ AI ດ້ານລຸ່ມເບື້ອງຂວາມື
2. ແລ້ວກົດປຸ່ມແປພາສາທີ່ຢູ່ເບື້ອງຂວາງມື
3. ພິມຄຳສັບທີ່ທ່ານຕ້ອງການແປໃສ່ຫ້ອງພິມຂໍ້ຄວາມ



XI. ສະຫຼຸບ

ລະບົບສື່ສານພາກລັດ (G-Chat V2) ຖືເປັນເຄື່ອງມືອັນສຳຄັນຍິ່ງໃນການຍົກລະດັບວຽກງານ ລະບົບລັດຖະບານດິຈິຕອນ ຂອງ ສປປ ລາວ. ການນຳໃຊ້ແອັບພິເຄຊັນດັ່ງກ່າວບໍ່ພຽງແຕ່ຊ່ວຍໃຫ້ການຕິດຕໍ່ສື່ສານ, ການຮັບ-ສົ່ງເອກະສານທາງການ, ຮູບພາບ, ວິດີໂອ ລະຫວ່າງພະນັກງານພັກ-ລັດ ມີຄວາມສະດວກສະບາຍ, ວ່ອງໄວເທົ່ານັ້ນ; ແຕ່ຍັງຮັບປະກັນໄດ້ເຖິງ ຄວາມປອດໄພທາງດ້ານຂໍ້ມູນຂ່າວສານຂອງພັກ-ລັດ ຢ່າງມີປະສິດທິພາບ.

ພ້ອມດຽວກັນນັ້ນ, ການເຊື່ອມໂຍງລະບົບປັນຍາປະດິດລາວ (LaoAI) ເຂົ້າໃນ G-Chat V2 ຍິ່ງເປັນການເພີ່ມຂີດຄວາມສາມາດໃຫ້ຜູ້ໃຊ້ງານສາມາດຄົ້ນຫາຂໍ້ມູນ, ຊ່ວຍວຽກຕ່າງໆ ແລະ ແປພາສາໄດ້ຢ່າງສະດວກສະບາຍຍິ່ງຂຶ້ນ. ດັ່ງນັ້ນ, ການຊຸກຍູ້ໃຫ້ພະນັກງານລັດທຸກທົ່ວໜ້າ ໄດ້ພ້ອມກັນນຳໃຊ້ລະບົບ G-Chat ເຂົ້າໃນການປະຕິບັດໜ້າທີ່ວຽກງານວິຊາສະເພາະປະຈຳວັນ ຈຶ່ງມີຄວາມໝາຍຄວາມສຳຄັນຢ່າງຍິ່ງ ໃນການຫັນໄປສູ່ລັດຖະບານດິຈິຕອນຢ່າງຮອບດ້ານ.